ແຂວງຄະນະງະວະ

# ຖ້າທ່ານເດືອດຮ້ອນກັບການລ້ຽງລູກແລະການສອນມາລະຍາດ...



ພວກເຮົາມາມ່ວນຊື່ນກັບການລ້ຽງລູກດ້ວຍການສອນນິໄສແລະມະລາຍາດທີ່ບໍ່ເພິ່ງພາການລົງໂທດທາງຮ່າງກາຍນຳກັນເທາະ

ສູນໃຫ້ຄຳປຶກສາເດັກນ້ອຍແຫ່ງແຂວງຄະນະງະວະ

ラオス語

# ກ່ອນອື່ນ

**“ການລົງໂທດທາງຮ່າງກາຍຕໍ່ເດັກນ້ອຍແມ່ນສິ່ງທີ່ບໍ່ດີແທ້ບໍ?”**

ແມ່ນແລ້ວ. ກົດໝາຍໄດ້ຮັບການປັບປຸງໃໝ່ວ່າ ຫ້າມໃຊ້ການລົງໂທດທາງຮ່າງກາຍເພື່ອສອນມາລະຍາດ.

**“ເຖິງຢ່າງໃດກໍ່ຕາມ, ຂ້ອຍກໍຍັງເປັນຫວ່ງຢູ່ວ່າ ໃນເວລາລູກຂອງເຮົາເຮັດການກະທຳທີ່ບໍ່ດີ, ເຖິງຈະໃຊ້ຄວາມຮຸນແຮງຕໍ່ລູກກໍ່ຕາມ, ຈະສິດສອນລູກໃຫ້ເຂົ້າໃຈ,ຖ້າວ່າເຮົາບໍ່ເຮັດດັ່ງນີ້, ບໍ່ໝັ້ນໃຈວ່າເຂົາເຈົ້າຈະສາມາດກາຍເປັນຜູ້ໃຫຍ່ທີ່ມີລະບຽບວິໄນໃນອະນາຄົດໄດ້ບໍ່.”**

ພວກເຮົາເຂົ້າໃຈຄວາມຮູ້ສຶກນັ້ນດີ. ແຕ່ວ່າ,

ພວກເຮົາຮູ້ແລ້ວວ່າການລົງໂທດທາງຮ່າງກາຍສົ່ງຜົນກະທົບທາງລົບຕໍ່ການເຕີບໃຫຍ່ຂອງເດັກນ້ອຍ.

**“ຄັນຊັ້ນ, ຂ້ອຍຈະເຮັດແນວໃດດີ? ຂ້ອຍຮັກລູກຂອງຂ້ອຍຫລາຍໆ, ແຕ່ຂ້ອຍກໍອຸກໃຈເລື່ອງການລ້ຽງລູກ.”**

ການລ້ຽງລູກໃນແຕ່ລະມື້ ແມ່ນເລື່ອງທີ່ລຳບາກແທ້ໆໄດ໋.

ດ້ວຍເຫດນີ້, ພວກເຮົາຈຶ່ງໄດ້ສ້າງຄູ່ມືນີ້ຂຶ້ນ ໂດຍປາຖະໜາວ່າຄູ່ມືນີ້ຈະສາມາດກາຍເປັນເຄັດລັບຂອງການລ້ຽງລູກທີ່ບໍ່ເພິ່ງພາການລົງໂທດທາງຮ່າງກາຍ ແລະ ຍັງຄິດວ່າຢາກຊ່ວຍບັນເທົາຄວາມອຸກໃຈຂອງຜູ້ປົກຄອງທຸກທ່ານໜ້ອຍໜຶ່ງກໍ່ຍັງດີ.

ໃນທີ່ນີ້, ພວກເຮົາຂໍແນະນຳຄອບຄົວໜຶ່ງທີ່ມີ **4** ຄົນ ເຊິ່ງເຂົາເຈົ້າກຳລັງຢູ່ໃນທ່າມກາງການລ້ຽງລູກ.

ພວກເຮົາມາເບິ່ງນຳກັນວ່າເຂົາເຈົ້າໄດ້ສອນມາລະຍາດແລະລ້ຽງລູກແບບໃດ ໂດຍສົມທຽບໃສ່ການລ້ຽງລູກຂອງທຸກທ່ານໄປນຳ.


ແນະນຳຕົວລະຄອນ ........................................ **2P**
ກາຕູນ “ໃນມື້ໜຶ່ງຂອງຄອບຄົວ”........................................ **3P**
ພວກເຮົາມາມ່ວນຊື່ນກັບການລ້ຽງລູກດ້ວຍການສອນມະລາຍາດ
ທີ່ບໍ່ເພິ່ງພາການລົງໂທດທາງຮ່າງກາຍນຳກັນເທາະ ........................................ **11P**
ບ່ອນໃຫ້ຄຳປຶກສາຕ່າງໆນາໆ ........................................ **13P**

# ແນະນຳຕົວລະຄອນ



### ພໍ່ ມະໂມະຣຸ ອາຍຸ **30** ປີ

ລາວກຳລັງມຸ່ງໝັ້ນທີ່ຈະເປັນຜູ້ຊາຍທີ່ມີສ່ວນຮ່ວມໃນການລ້ຽງລູກ, ແຕ່ວ່າ ເນື່ອງຈາກຫຍຸ້ງກັບວຽກງານຈຶ່ງມີເວລາສຳຜັດລູກໜ້ອຍ. ບໍ່ສາມາດທີ່ຈະຈັດການກັບຄວາມຫ້າວຫັນຂອງທ້າວຣະຣຸໂຕະໄດ້, ບາງເທື່ອກໍ່ເຄີຍຮ້າຍດ່າ ຫຼື ເອົາມືຕີບຕີ.



### ແມ່ ອິຕຸໂຢະ ອາຍຸ **28** ປີ

ເປັນແມ່ທີ່ສົດໃສແລະໃຈດີ. ໃນໂອກາດທີ່ນາງເມະອິອາຍຸໄດ້ **1** ປີ, ລາວໄດ້ເອົາລູກໄປຝາກຢູ່ໂຮງຮຽນລ້ຽງເດັກແລະໄດ້ກັບຄືນມາເຮັດວຽກອີກ, ແຕ່ວ່າ ເນື່ອງຈາກຫຍຸ້ງກັບການລ້ຽງລູກ, ວຽກເຮືອນ ແລະ ວຽກງານຂອງລາວເອງ ຈຶ່ງເຮັດໃຫ້ລາວວຸ້ນວາຍ ... ຫລາຍຂຶ້ນ.



### ລູກຊາຍກົກ ຣະຣຸໂຕະ ອາຍຸ **4** ປີ

ເປັນເດັກຊາຍທີ່ແຂງແຮງແລະຫ້າວຫັນທີ່ຈະທຽວໄປໂຮງຮຽນລ້ຽງເດັກ. ລາວມັກຫຼິ້ນຢູ່ຂ້າງນອກຫລາຍໆ, ແຕ່ວ່າ ຍັງບໍ່ສາມາດນຸ່ງເຄື່ອງໄດ້ດີ.



### ລູກສາວກົກ ເມະອິ ອາຍຸ **1** ປີ

ເປັນເດັກຍິງທີ່ຈະທຽວໄປໂຮງຮຽນລ້ຽງເດັກຄືກັນກັບທ້າວຣະຣຸໂຕະ. ລາວເລີ່ມຈື່ຈຳຄຳເວົ້າ, ລັກສະນະທ່າທາງຂອງລາວເວລາຮຽນແບບແລະຮຽນຍ່າງໄປຕາມຫລັງທ້າວຣະຣຸໂຕະແມ່ນໜ້າຮັກຫລາຍ.

# ① ມ້ຽນເຄື່ອງ


ຄືເຮັດຊະຊາຍຫຼາຍ
ເຕັມໄປໝົດແບບນີ້...
ອີກຈັກໜ້ອຍຊິໄດ້ກິນອາຫານ
ວ່າງແລ້ວບໍ່ມ້ຽນເຄື່ອງບໍ?
ບໍ່.....
ຍັງຫຼິ້ນຢູ່.....
ແມ່.....
ອາຫານວ່າງ.....
ຈົ່ງມ້ຽນເຄື່ອງດຽວນີ້
ດຽວນີ້!
ຊິຖິ້ມໝົດເລີຍເດີ້!!
ເປັນຫຍັງຄືມີແຕ່
ຂ້ອຍຕະຫຼອດ...
ທັງທີ່ເມອີບໍ່ເຄີຍມ້ຽນ
ເຄື່ອງເລີຍ...
ອາຫານວ່າງ.....
ຣະຣຸໂຕະ







**ຈຸດສຳຄັນ**

ເຖິງວ່າແມ່ໄດ້ຮ້າຍດ່າໂດຍບໍ່ທັນໄດ້ຄິດ, ແຕ່ເບິ່ງຄືວ່າລາວໄດ້ລອງຄິດທົບທວນຄືນໜ້ອຍໜຶ່ງແລ້ວ. ຈະເປັນການດີຖ້າທ່ານສາມາດມ້ຽນເຄື່ອງນຳກັນກັບລູກໄປພ້ອມໆກັນກັບການສ້າງວິໄສທັດໃນອະນາຄົດ ເຊັ່ນ ບອກເຫດຜົນທີ່ຈະມ້ຽນເຄື່ອງ

# ② ຊິເຮັດເອົາເອງ!






ຈຸດສຳຄັນ

ຕອນເຊົ້າແມ່ນເວລາທີ່ຫຍຸ້ງຈິ່ງເປັນເລື່ອງລຳບາກຢູ່, ແຕ່ວ່າ ການຍອມຮັບແລະລໍຖ້າ "ຄວາມຮູ້ສຶກທີ່ຢາກເຮັດ" ຂອງລູກ ຈະເປັນການສົ່ງເສີມຄວາມຮູ້ສຶກດີໃຈໃນເວລາທີ່ເຮັດໃຫ້ສິ່ງໃດສິ່ງໜຶ່ງສຳເລັດ ແລະ ຈະເຊື່ອມໂຍງໄປສູ່ການມາໂຮງຮຽນລ້ຽງເດັກດ້ວຍອາລົມທີ່ດີ.

# ③ ອັນຕະລາຍ!


ແມ່ໄດ້ອອກໄປເຮັດວຽກໃນວັນພັກວັນເສົາເປັນມື້ທີ່ມີຜິກຕິກ...
ໂອ້ຍ ຕາຍແລ້ວ.....
ພວກລູກກຳລັງເຮັດຫຍັງກັນຢູ່.....!
ເຢ້.....!
ເມະອິຫຼິ້ນນຳ.....
ພໍ່ບອກວ່າຢ່າໂດດຫຼິ້ນເທິງໂຊຟາ, ຊິໃຫ້ເວົ້າຈັກເທື່ອຈຶ່ງເຂົ້າໃຈບໍ່!
ຮືຮື




ຈຸດສຳຄັນ

ຈະເປັນການດີຖ້າຜູ້ໃຫຍ່ທີ່ຄິດວ່າຕົນເອງບໍ່ດີກໍ່ສາມາດຂໍໂທດໄດ້ຄືດັ່ງພໍ່ຄົນນີ້. ຖ້າທ່ານສາມາດບອກເຫດຜົນຂອງຄວາມເປັນອັນຕະລາຍໃຫ້ລູກຮັບຮູ້ຢ່າງເຂົ້າໃຈງ່າຍໆກໍ່ຈະດີຫຼາຍ.

# ④ ແມ່ບໍ່ສະບາຍ...


ຮ່າງກາຍກໍ່ເມື່ອຍລ້າ ແລະ ທັງເຈັບຫົວອີກ
ເບິ່ງຄືຊິບໍ່ສາມາດລຸກຂຶ້ນໄດ້ແລ້ວ ຊິເຮັດແນວໃດເດ້...
ພໍ່ຢູ່ໃນ
ລະຫວ່າງ
ການໄປ
ເຮັດວຽກຢູ່
ຕ່າງແຂວງ
ວັນພະຫັດ
ແມ່ນມື້ທີ່ເມື່ອຍ
ທີ່ສຸດ...
ອ້າວ,
ພໍ່ບໍ່ຢູ່ບໍ່ນໍ້...
ແມ່.....
ເນອິ, ຫລີກແນ່.
ຂ້ອຍຊິຫົ່ມຜ້າ
ໃຫ້ແມ່ນີ.


ຕິດຕໍ່ຫາບໍລິສັດເພື່ອຂໍລາພັກ...
ຂໍຮ້ອງຜູ້ໃດຜູ້ໜຶ່ງໃຫ້ຊ່ວຍໄປສົ່ງລູກໄປໂຮງຮຽນ
ລ້ຽງເດັກພຽງຢ່າງດຽວກໍ່ຍັງດີ...
ແມ່.....
ເປັນຫຍັງບໍ່?
ແມ່.....
ລຸກຂຶ້ນ.....
ເອີ...
ບໍ່ເປັນຫຍັງ







**ຈຸດສຳຄັນ**

ໃນເວລາທີ່ມີຫຍັງເກີດຂຶ້ນກັບຜູ້ໃຫຍ່ແລະບໍ່ສາມາດເບິ່ງແຍງລູກຕົນເອງໄດ້, ປົກກະຕິ, ຖ້າຮູ້ຈັກຄົນທີ່ຈະສາມາດເບິ່ງແຍງລູກແທນໄວ້ກ່ອນ ແລະ ຖ້າໄດ້ຮັບການຊ່ວຍເຫຼືອໃນຍາມທີ່ຄັບຂັນກໍ່ຈະອຸ່ນໃຈໄດ້.

ສະພາບຂອງກະຕູນ "ໃນມື້ໜຶ່ງຂອງຄອບຄົວ" ເປັນແນວໃດ**?**

ໄດ້ມີສາກທີ່ທັງພໍ່ແລະແມ່ຕ່າງກໍ່ໄດ້ຮ້ອງຂຶ້ນດ້ວຍສຽງດັງໂດຍບໍ່ຮູ້ຕົວ ແລະ ບາງເທື່ອກໍ່ໄດ້ຕີບຕີໄດ້ເນາະ.

ເຖິງຢ່າງໃດກໍ່ຕາມ, ບໍ່ມີຄົນທີ່ຈະສາມາດລ້ຽງລູກໄດ້ຢ່າງສົມບູນແບບເລີຍດອກ. ຈຸດດີຂອງຄອບຄົວນີ້ຄື ບ່ອນທີ່ເຂົາເຈົ້າໄດ້ຂໍໂທດລູກຢ່າງຈິງຈັງໃນເວລາທີ່ຕົນເອງໄດ້ເຮັດຜິດພາດໄປ ຫຼື ສັງເກດເຫັນຄວາມຜິດ ແລະ ໄດ້ດັດແປງ ເຊັ່ນ ປ່ຽນວິທີຮັບມືກັບລູກ ບໍ່ແມ່ນບໍ.

**ລູກຈະເຮັດໃຫ້ຄວາມຮັກເລິກເຊິ່ງຂຶ້ນດ້ວຍການເບິ່ງລັກສະນະທ່າທາງທີ່ພໍ່ແມ່ພະຍາຍາມເຮັດເພື່ອເຂົາເຈົ້າ ແລະ ທຸກຄົນຈະຮຽນຮູ້ການເຕີບໃຫຍ່ໄປພ້ອມກັບຄວາມຜິດພາດ.**

ແນ່ນອນ, ການຮັບມືກໍ່ຈະແຕກຕ່າງກັນໄປຂຶ້ນກັບອາຍຸ, ນິໄສ ແລະ ສະຖານະການຂອງເດັກນ້ອຍ. ເດັກນ້ອຍຈະເຕີບໃຫຍ່ຂຶ້ນໃນທຸກໆມື້ ແລະ ພໍ່ແມ່ເອງກໍ່ຈະເຕີບໃຫຍ່ຂຶ້ນຄຽງຄູ່ກັນໄປໃນທຸກໆມື້. ຂໍໃຫ້ທ່ານມ່ວນຊື່ນກັບການລ້ຽງລູກໃຫ້ສົມກັບທີ່ເປັນທ່ານແລະລູກຂອງທ່ານ ໂດຍຂໍຢືມຄວາມຊ່ວຍເຫຼືອຈາກຄົນອ້ອມຂ້າງໄປນຳ.

ເຖິງວ່າ, ສຳລັບຜູ້ປົກຄອງທຸກທ່ານແລ້ວ ການລ້ຽງລູກຈະມີແຕ່ສິ່ງທີ່ພົບເຫັນເປັນຄັ້ງທຳອິດ. ເປັນເລື່ອງທຳມະດາທີ່ທ່ານຈະລັງເລ ຫຼື ອຸກໃຈ. ໃນເວລານັ້ນ, ໃຫ້ທ່ານລອງນຶກເຖິງເລື່ອງ ກາຕູນ "ໃນມື້ໜຶ່ງຂອງຄອບຄົວ" ເບິ່ງເດີ້.

ບົດຄວາມ

## ຫຍັງການລົງໂທດທາງຮ່າງກາຍຈຶ່ງເປັນສິ່ງທີ່ບໍ່ດີ?

ໃນຂໍ້ມູນຂອງກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການໄດ້ແນະນຳຜົນການຄົ້ນຄວ້າທີ່ວ່າ ຖ້າສົມທຽບເດັກນ້ອຍທີ່ໄດ້ຖືກລົງໂທດທາງຮ່າງກາຍຈາກພໍ່ແມ່ກັບເດັກນ້ອຍທີ່ບໍ່ໄດ້ຖືກເລີຍ ເຫັນວ່າມີເຂົາເຈົ້າມີແນວໂນ້ມທີ່ວ່າ **"ບໍ່ສາມາດຟັງເລື່ອງທີ່ບອກສອນຢ່າງໃຈເຢັນໄດ້" "ບໍ່ສາມາດຮັກສາສັນຍາໄດ້" "ບໍ່ສາມາດຕັ້ງສະມາທິໃສ່ເລື່ອງໃດໜຶ່ງໄດ້" "ບໍ່ສາມາດອົດທົນໄດ້" "ບໍ່ສາມາດສະແດງອາລົມອອກມາຢ່າງໄດ້ດີໄດ້"** "ບໍ່ສາມາດເຮັດວຽກເປັນກຸ່ມໄດ້".

ນອກຈາກນີ້, ຍັງມີກໍລະນີທີ່ຍ້ອນວ່າເດັກນ້ອຍລຶ້ງເຄີຍກັບຄວາມເຈັບປວດຈຶ່ງເຮັດໃຫ້ຈຳເປັນຕ້ອງມີການໃຊ້ຄວາມຮຸນແຮງເພີ່ມຂຶ້ນເພື່ອໃຫ້ໄດ້ຜົນຄືກັນ ເຊິ່ງອັນນີ້ຈະກາຍເປັນການທາລຸນເດັກນ້ອຍ.

## ທ່ານບໍ່ໄດ້ເຮັດເລື່ອງແບບນີ້ບໍ?

### ເຫຼົ່ານີ້ແມ່ນເປັນການລົງໂທດທາງຮ່າງກາຍໝົດ

- ຍ້ອນວ່າໄດ້ເຕືອນດ້ວຍຄຳເວົ້າ **3** ເທື່ອແລ້ວແຕ່ບໍ່ຟັງຄວາມ ຈຶ່ງໄດ້ຕີບແກ້ມ
- ຍ້ອນວ່າໄດ້ເອົາສິ່ງຂອງສຳຄັນມາເຮັດຕະຫຼົກຫຼິ້ນ ຈຶ່ງໄດ້ໃຫ້ນັ່ງຄຸກເຂົ່າເປັນເວລານານ
- ຍ້ອນວ່າໄດ້ຕີໝູ່ແລະເຮັດໃຫ້ບາດເຈັບ ຈຶ່ງໄດ້ຕີລູກໂດຍໄດ້ເຮັດຄືກັນ
- ຍ້ອນວ່າໄດ້ລັກເອົາຂອງຄົນອື່ນ ຈຶ່ງໄດ້ຕີບກົ້ນ
- ຍ້ອນວ່າບໍ່ໄດ້ເຮັດວຽກບ້ານ ຈຶ່ງບໍ່ໄດ້ເອົາເຂົ້າແລງໃຫ້ກິນ
- ຍ້ອນວ່າບໍ່ທຳຄວາມສະອາດ ຈຶ່ງໄດ້ເອົາຜ້າຂີ້ລີ້ວກົດໃສ່ໜ້າ

### ລຸ່ມນີ້ເປັນການກະທຳທີ່ທຳຮ້າຍຈິດໃຈຂອງເດັກນ້ອຍ

- ໄດ້ເວົ້າໃສ່ໂດຍຕັ້ງໃຈວ່າຈະຍອກຫຼິ້ນໃນລັກສະນະທີ່ຄ້າຍກັບວ່າເປັນການປະຕິເສດຕົວຕົນຂອງເດັກນ້ອຍ ເຊັ່ນ "ຄົນຄືມຶງຖ້າບໍ່ເກີດອອກມາຄືຊິດີ" ເປັນຕົ້ນ
- ໄດ້ເອົາອ້າຍ ຫຼື ນ້ອງມາຕຳນິຕິຕຽນດ້ວຍຂໍ້ແກ້ຕົວທີ່ວ່າເພື່ອເຮັດໃຫ້ເຂົາເຈົ້າມີໃຈກະຕືລືລົ້ນຢາກເຮັດ

　　ອ້າງອີງຈາກ ແຜ່ນພັບ "ພວກເຮົາມາເຜີຍແຜ່ການລ້ຽງລູກທີ່ບໍ່ເພິ່ງພາການລົງໂທດທາງຮ່າງກາຍແລະອື່ນໆນຳກັນເທາະ" ທີ່ຈັດທຳໂດຍ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

　　ພວກເຮົາຄິດວ່າຢາກເປັນກຳລັງໃຈໃຫ້ແກ່ການເຕີບໃຫຍ່ຂອງລູກທ່ານແລະການລ້ຽງລູກຂອງທ່ານຢ່າງເຖິງທີ່ສຸດ.

　　ກະລຸນາເຂົ້າມາຂໍຄຳປຶກສາຢ່າງເປັນກັນເອງໃນເວລາທີ່ທ່ານເດືອດຮ້ອນ ເຊັ່ນ **"ລູກບໍ່ຟັງຄວາມ" "ຂ້ອຍຈະຕີບຕີລູກໂດຍບໍ່ຮູ້ຕົວແລ້ວ" "ຢາກໃຫ້ຮັບຟັງຄວາມອຸກໃຈໃນການລ້ຽງລູກ"** ເປັນຕົ້ນ. ພຽງແຕ່ທ່ານເລົ່າໃຫ້ພວກເຮົາຟັງ ກໍ່ອາດເຮັດໃຫ້ຄວາມຮູ້ສຶກຂອງທ່ານເບົາສະບາຍຂຶ້ນ.



　　ໃນໜ້າຕໍ່ໄປ, ໄດ້ລະບຸບ່ອນໃຫ້ຄຳປຶກສາຕ່າງໆນາໆທີ່ທ່ານສາມາດຂໍຄຳປຶກສາໄດ້. ບໍ່ພຽງແຕ່ອົງການດັ່ງທີ່ກ່າວມານີ້, ຢູ່ສະຖານຮັບລ້ຽງເດັກແລະສູນຊ່ວຍເຫຼືອການລ້ຽງລູກກໍ່ຍັງຮັບຄຳປຶກສາ, ສະນັ້ນ ເຊີນທ່ານລອງມານຳໃຊ້ເບິ່ງໃຫ້ໄດ້.

# ບ່ອນໃຫ້ຄໍາປຶກສາຕ່າງໆນາໆ

## ສູນໃຫ້ຄໍາປຶກສາເດັກນ້ອຍແຫ່ງແຂວງຄະນະງະວະ

| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍ | ນໍາເບີໂທລະສັບ | ເມືອງຕ່າງທີ່ຮັບຜິດຊອບ |
|---|---|---|
| ສູນກາງໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍ | **0466-84-1600** | ເມືອງຟຸຢິສະວະ, ເມືອງຈິງະສະກິ, ເມືອງສະມຸກະວະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງຮິຣະສຶກະ | **0463-73-6888** | ເມືອງຮິຣະສຶກະ, ເມືອງຣະດະໂນະ, ເມືອງອິເສະຣະຣະ ເມືອງໂອອິໂສະ, ເມືອງນິໂນະມີຢະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍທ້ອງຖິ່ນຄະມະຄຸຣະ ມິອຸຣະ | **046-828-7050** | ເມືອງຄະມະຄຸຣະ, ເມືອງສືຊິ, ເມືອງມິອຸຣະ, ເມືອງຣະຢະມະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງໂອະດະວະຣະ | **0465-32-8000** | ເມືອງໂອະດະວະຣະ, ເມືອງມິນະມິອະຊີງະຣະ, ເມືອງນະກະອິ, ເມືອງໂອອິ, ເມືອງມັດສືດະ ເມືອງຢະມະຄິຕະ, ເມືອງໄຄເຊ, ເມືອງຮະໂກະເນະ, ເມືອງມະນະສືຣຶ, ເມືອງຢຸງະວະຣະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງອັດສືງິ | **046-240-6430** | ເມືອງອັດສືງິ, ເມືອງເອະບີນະ, ເມືອງສະມະ, ເມືອງໄອຄະວະ, ເມືອງຄິໂຍະຄະວະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງອະຍະເສ ຍະມະໂຕະ | **0466-81-8066** | ເມືອງຍະມະໂຕະ, ເມືອງອະຍະເສະ |

## ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍຂອງອໍານາດການປົກຄອງສ່ວນທ້ອງຖິ່ນອື່ນພາຍໃນແຂວງ

| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍ | ນໍາເບີໂທລະສັບ | ເມືອງແລະເຂດຕ່າງໆທີ່ຮັບຜິດຊອບ |
|---|---|---|
| ສູນກາງໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງເມືອງໂຍະໂກະຮະມະ | **045-260-6510** | ເຂດສຶຣຶມິ, ເຂດຄະນະງະວະ, ເຂດນິຊິ, ເຂດນະກະ, ເຂດມິນະມິ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງພາກຕາເວັນຕົກ | **045-331-5471** | ເຂດໂຮະໂດະງະຍະ, ເຂດອະສະຮິ, ເຂດອິສືມິ, ເຂດເສະຍະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງພາກໃຕ້ | **045-831-4735** | ເຂດໂຄນັນ, ເຂດອິໂສະໂງະ, ເຂດຄະນະສະວະ, ເຂດໂຕະສຶກະ, ເຂດສະກະເອະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງພາກເໜືອ | **045-948-2441** | ເຂດໂຄໂຮະກຸ, ເຂດມິໂດະຣິ, ເຂດອະໂອະບະ, ເຂດສຶສຶກິ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງພາກໃຕ້ເມືອງຄະວະສະກິ | **044-542-1234** | ເຂດຄະວະສະກິ, ເຂດໄຊໂວ, ເຂດນະກະຮະຣະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງພາກກາງ | **044-877-8111** | ເຂດທະກະສື, ເຂດມິຍະມະເອະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງພາກເໜືອ | **044-931-4300** | ເຂດທະມະ, ເຂດອະສະໂອະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງເມືອງສະງະມິຮະຣະ | **042-730-3500** | ເມືອງສະງະມິຮະຣະ |
| ສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍແຫ່ງເມືອງໂຍະໂກະສຸກະ | **046-820-2323** | ເມືອງໂຍະໂກະສຸກະ |

## ໃຫ້ຄໍາປຶກສາຕ່າງໆນາໆທາງໂທລະສັບ

| ໃຫ້ຄໍາປຶກສາທາງໂທລະສັບ | ເບີໂທລະສັບ | ໝາຍເຫດ |
|---|---|---|
| ກ່ຽວກັບຄອບຄົວເດັກນ້ອຍໂທແຈ້ງ **110** | **0466-84-7000** | **9:00 ～ 20:00** |
| ສາຍດ່ວນສໍາລັບສິດທິມະນຸດ-ເດັກນ້ອຍ | **0466-84-1616** | **9:00 ～ 20:00**<br>(ສໍາລັບສະເພາະເດັກນ້ອຍ-ສໍາລັບສະເພາະແຈ້ງການ) |
| ເບີໂທລະສັບທີ່ຮັບມືກັບການທາລຸນຂອງສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍ | **189** (ບໍ່ເສຍຄ່າໃຊ້ຈ່າຍ) | ຮອງຮັບ **24** ຊົ່ວໂມງ |
| ເບີໂທລະສັບສໍາລັບສະເພາະຂໍຄໍາປຶກສາກັບສູນໃຫ້ຄໍາປຶກສາກ່ຽວກັບເດັກນ້ອຍ | **0120-189-783**<br>(ບໍ່ເສຍຄ່າໃຊ້ຈ່າຍ) | |

# ປ່ອງບໍລິການຂອງເມືອງ

| ເມືອງ | ພະແນກທີ່ຮັບຜິດຊອບ | ສາຍກົງຫາພະແນກທີ່ຮັບຜິດຊອບການໃຫ້ຄຳປຶກສາເດັກນ້ອຍ |
|---|---|---|
| ເມືອງຮິຣະສຶກະ | ພະແນກຄອບຄົວເດັກນ້ອຍ(ສູນຄອບຄົວເດັກນ້ອຍ) | **0463-21-9843** |
| ເມືອງຄະມະຄຸຣະ | ສູນຄອບຄົວເດັກນ້ອຍ(ຫ້ອງໃຫ້ຄຳປຶກສາເດັກນ້ອຍກັບຄອບຄົວ) | **0467-23-0630** |
| ເມືອງຟຸຢິສະວະ | ພະແນກຄອບຄົວເດັກນ້ອຍ(ສູນຄອບຄົວເດັກນ້ອຍ) | **0466-50-3569** |
| ເມືອງໂອະດະວະຣະ | ພະແນກຊ່ວຍເຫຼືອເດັກແລະໄວໜຸ່ມ | **0465-46-6763** |
| ເມືອງຈິງະສະກິ | ພະແນກໃຫ້ຄຳປຶກສາດ້ານການພັດທະນາເດັກນ້ອຍ | **0467-81-7170** |
| ເມືອງສຶຊິ | ພະແນກຊ່ວຍເຫຼືອດ້ານການລ້ຽງລູກ(ສູນຄອບຄົວເດັກນ້ອຍ) | **046-873-1111** (ຕາງໜ້າ) |
| ເມືອງມິອຸຣະ | ພະແນກເດັກນ້ອຍ<br>ສູນປຶກສາຫາລືພໍ່ແມ່ແລະເດັກ ຮິນະຕະບົກໂກະ | **046-882-1111** (ຕາງໜ້າ) |
| ເມືອງຮະດະໂນະ | ພະແນກຊ່ວຍເຫຼືອຄອບຄົວເດັກນ້ອຍ<br>(ເບີໂທລະສັບສຳລັບສະເພາະຂໍຄຳປຶກສາ) | **0463-82-5273**<br>**0463-84-7800** |
| ເມືອງອັດສຶງິ | ສູນຄອບຄົວເດັກນ້ອຍ(ເບີໂທລະສັບສຳລັບສະເພາະຂໍຄຳປຶກສາ) | **046-221-0181** |
| ເມືອງຢະມະໂຕະ | ພະແນກລ້ຽງລູກໄດ້ຢ່າງວ່ອງໄວແລະແຂງແຮງ(ສູນຄອບຄົວເດັກ) | **046-260-5618** |
| ເມືອງອິເສະຮະຣະ | ພະແນກໃຫ້ຄຳປຶກສາຄອບຄົວເດັກນ້ອຍ | **0463-94-4642** |
| ເມືອງເອະບິນະ | ພະແນກໃຫ້ຄຳປຶກສາດ້ານການລ້ຽງລູກ | **046-235-4825** |
| ເມືອງສະມະ | ພະແນກຄອບຄົວເດັກນ້ອຍ | **046-252-8026** |
| ເມືອງມິນະມິອະຊິງະຣະ | ພະແນກເດັກນ້ອຍ | **0465-73-8072** |
| ເມືອງອະຢະເສະ | ພະແນກຜັກດັນການສ້າງສຸຂະພາບ | **0467-77-1133** |
| ເມືອງຮະຢະມະ | ພະແນກພັດທະນາເດັກນ້ອຍ | **046-876-1111** (ຕາງໜ້າ) |
| ເມືອງສະມຸງະວະ | ພະແນກຊ່ວຍເຫຼືອດ້ານການລ້ຽງລູກ | **0467-74-1111** (ຕາງໜ້າ) |
| ເມືອງໂອອິໂສະ | ພະແນກຊ່ວຍເຫຼືອດ້ານການລ້ຽງລູກ<br>(ສູນລວມການຊ່ວຍເຫຼືອດ້ານການລ້ຽງລູກ) | **0463-71-3377** |
| ເມືອງນິໂນະມິຢະ | ພະແນກລ້ຽງລູກ-ສຸຂະພາບ | **0463-71-7100** |
| ເມືອງນະກະອິ | ພະແນກສະຫວັດດີການ | **0465-81-5548** |
| ເມືອງໂອອິ | ພະແນກລ້ຽງລູກແລະສຸຂະພາບ | **0465-83-8012** |
| ເມືອງມັດສຶດະ | ພະແນກລ້ຽງລູກແລະສຸຂະພາບ | **0465-84-5544** |
| ເມືອງຢະມະຄິຕະ | ພະແນກສະຫວັດດີການ | **0465-75-3644** |
| ເມືອງໄຄເຊ | ພະແນກເດັກນ້ອຍ | **0465-84-0327** |
| ເມືອງຮະໂກະເນະ | ພະແນກຊ່ວຍເຫຼືອດ້ານການລ້ຽງລູກ | **0460-85-9595** |
| ເມືອງມະນະສຶຣຶ | ພະແນກສະຫວັດດີການ | **0465-68-1131** (ຕາງໜ້າ) |
| ເມືອງຢຸງະວະຣະ | ພະແນກຊ່ວຍເຫຼືອເດັກນ້ອຍ ສູນຊ່ວຍເຫຼືອດ້ານການລ້ຽງລູກ (ຢຸຕະປິ່ນ) | **0465-20-4940** |
| ເມືອງໄອຄະວະ | ພະແນກຊ່ວຍເຫຼືອດ້ານການລ້ຽງລູກ | **046-285-6932** |
| ບ້ານຄິໂຢະຄະວະ | ພະແນກສຸຂະພາບແລະສະຫວັດດີການດ້ານການລ້ຽງລູກ | **046-288-3861** |



## ລາຍໃຫ້ຄຳປຶກສາຄອບຄົວເດັກນ້ອຍແຫ່ງຄະນະງະວະ ໂທແລ້ງ

110

LINE

ກະລຸນາເພີ່ມເຂົ້າເປັນ

ໝູ່ທາງລາຍ.

ທ່ານສາມາດຂໍຄຳປຶກສາໂດຍບໍ່ເສຍຄ່າໃຊ້ຈ່າຍແລະບໍ່ລະບຸຊື່

(ພຽງແຕ່ມີຊື່ທີ່ບັນທຶກໃນລາຍກັບຮູບພາບຂອງໂປຣຟາຍເທົ່ານັ້ນ)

【ໄລຍະເວລາທີ່ຮັບບໍລິການໃຫ້ຄຳປຶກສາ】

(ຍົກເວັ້ນຊ່ວງເວລາຕັ້ງແຕ່ທ້າຍປີຈົນຮອດຕົ້ນປີໃໝ່)

**Other Languages**

| | | | | |
|---|---|---|---|---|
| English 英語 | 中国语 中国語 | 한국·조선어 韓国・朝鮮語 | Español スペイン語 | Português ポルトガル語 |
| Tagalog タガログ語 | ภาษาไทย タイ語 | Tiếng Việt ベトナム語 | ភាសាខ្មែរ カンボジア語 | ພາສາລາວ ラオス語 |


監　　　修　子どもの虹情報研修センター　川﨑二三彦

日本女子大学名誉教授　鵜養美昭

武蔵野大学看護学部　中板育美

作成・発行　神奈川県児童相談所

デザイン・印刷　有限会社 湘南グッド